ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ
LIWG

# LIWG Weekly News Update
# ສັງລວມຂ່າວປະຈໍາອາທິດ

**LIWG Weekly News Update** | **5 – 9 March, 2018**
**ສັງລວມຂ່າວປະຈໍາອາທິດ ໂດຍ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ** | **ວັນທີ 5 - 9 ມີນາ 2018**



Forest cover climbs to 58:F but still behind 2020 target: KPL
*Photo by KPL: The landscape of forest in Laos*




ແຜນຍຸດທະສາດປ່າໄມ້ແຕ່ນີ້ຫາ 2020 ທົ່ວປະເທດຈະຕ້ອງມີເນື້ອທີ່ປ່າໄມ້ປົກຫຸ້ມ 70%: ຂ່າວໂດຍຈໍາປາໂພສ
*ພາບໂດຍ ຈໍາປາໂພສ: ກອງປະຊຸມສົ່ງເສີມການປູກໄມ້ ປະຈໍາປີ 2018*

## English news

### [DPM calls for greater protection of forests, planting of more trees]: Vientiane Times

***March6, 2018***

Deforestation is triggering concern and underlining the critical need to better protect forests and plant more trees, the Deputy Prime Minister has told authorities in charge.

Converting forest areas to other purposes without proper planning, shifting slash and burn cultivation, and unsustainable logging have been the three main causes for forest loss, Dr Sonexay told the three-day meeting.

Reports have also emerged that illegal logging was another cause of forest loss.

In 2016, Prime Minister Thongloun Sisoulith issued Prime Ministerial Order No. 15 prohibiting the export of unfinished wood products in a move aimed at processing timber in the country and thus adding value before wood products were exported.

*Read relevant article:* *President pushes for rural development, increased forest cover*

**Preserve natural environment and culture, PM advises: Vientiane Times**

***March8, 2018***

Prime Minister Thongloun Sisoulith has called on authorities to intensify their efforts to preserve Laos' scenic beauty, which is considered key to the development of tourism.

But critics are very concerned about rapid and unrestrained development in the capital. They say that if more tall buildings are erected in the old quarter, which is arguably the most popular area with tourists because of its narrow streets and historic charm, it could destroy the very thing that makes this location so attractive.

When asked about the preservation of Vientiane's old (inner) city, Mr Ounthuang said the ministry had registered old buildings in the city centre.

One of the topics of public debate these days is how Laos can balance development with the preservation of the natural landscape, culture and heritage, which are significant draws for the tourism industry.

*Read relevant article: Tourism and development threaten Laos's French traditions*

**Forest Cover Climbs To 58%, But Still Behind 2020 Target: KPL**

***March 9, 2018***

Forest cover of the Lao PDR has climbed from 40% in 2012 to 58% of the land area of the country last year, according to Mr Sousad Xayakoummane, Director of Department of Forestry, Ministry of Agriculture and Forestry.

The government has an ambitious plan to restore forest cover to 70 % of the country's terrain by 2020.

In 2000, the government issued a decree on commercial tree plantation and environmental protection allowing the allocation of tree plantation areas and land concession activities, ownership of farmed trees, and credit policy, tax exemption and reduction.

The reduction of the forest cover over the past decades to improper and unplanned use of forest areas, deforestation, slash-and-burn-cultivation practices, especially by local people in mountainous areas.

**Hundreds held responsible for illegal logging, trade: Vientiane Times**

***March10, 2018***

As many as 595 people have been held responsible for involvement in the illegal exploitation of forest resources including illegal logging and trade over the past year, according to an official report.

They include 50 state officials, 56 businesspeople, 363 members of the Lao public, 121 Vietnamese, and five Chinese, according to a report that was presented at a national meeting of the agriculture, forestry and rural development sector this week.

The initiation of legal proceedings is part of the government's nationwide crackdown on illegal logging and wood processing businesses in line with Prime Minister's Order No. 15 issued in 2016.

Mr Manolack Rasachak added that most wood processing businesses have improved their operations to satisfy the government's requirements as stipulated in the PM's Order No. 15.

**Read more highlight news this week:**

Media get firsthand view of Japan's development projects in Laos: Vientiane Times

Ecotourism payments for more wildlife sightings linked to conservation benefits in Laos: Mongabay

Agro-Forestry GDP Reaches 22 Trillion KIP: KPL

## ຂ່າວພາສາລາວ

**5 ແຂວງຮັບເອົາຄຳສະເໜີ ຄ່າຊົດເຊີຍທາງລົດໄຟ: ຂ່າວໂດຍ ວິທະຍຸເອເຊຍເສຣີ**

*ວັນທີ 5 ມີນາ 2018*

ມາເຖິງປັດຈຸບັນ ສະພາປະຊາຊົນ ຂັ້ນແຂວງ 5 ແຂວງຄື ແຂວງຫລວງນໍ້າທາ, ອຸດົມໄຊ, ຫຼວງພຣະບາງ, ວຽງຈັນ ແລະ ນະຄອນຫຼວງວຽງຈັນ ຮັບຮອງເອົາຄຳສເນີ ກ່ຽວກັບ ຄ່າຊົດເຊີຍ ຜູ້ໄດ້ຮັບຜົລກະທົບ ຈາກໂຄງການ ທາງຣົດໄຟ ລາວ-ຈີນ ນັ້ນແລ້ວ ແລະ ຣັຖບານ ຈະພຍາຍາມ ຈ່າຍຄ່າຊົດເຊີຍ ໃຫ້ທັນພາຍໃນເດືອນນີ້ ຫຼື ເດືອນໜ້າ.

ຄະນະຄຸ້ມຄອງໂຄງການສ້າງທາງຣົດໄຟ ກຳລັງເລັ່ງຂໍເອກກະສານ ກ່ຽວກັບຄ່າຊົດເຊີຍຈາກ 3 ແຂວງ ທີ່ຍັງບໍ່ສົ່ງມາ ໃຫ້ເພື່ອທີ່ຈະເຮັດ ໃຫ້ຂັ້ນຕອນ ຂອງການຊົດເຊີຍອອກມາໄວທີ່ສຸດ. ການຮັບຄ່າຊົດເຊີຍນັ້ນມີ 6 ລາຍເຊັນ ຄື: ລາຍເຊັນຂອງປະຊາຊົນ, ຂອງນາຍບ້ານ, ນະໄກ່ເກັ່ຍຂັ້ນເມືອງ ແລະຂັ້ນແຂວງ, ຜູ້ຮັບເໝົາກໍ່ສ້າງ ແລະ ບໍຣິສັດປຶກສາໂຄງການ.

*ອ່ານຂ່າວທີ່ກ່ຽວຂ້ອງ: ສຳພາດ ຮອງຣັຖມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ກ່ຽວກັບຄ່າຊົດເຊີຍຜູ້ໄດ້ຮັບຜົນກະທົບ*

**ປະຊາຊົນ 83 ຄອບຄົວໄດ້ຮັບເຮືອນຫຼັງໃໝ່ຈາກໂຄງການເຂື່ອນໄຟຟ້ານໍ້າງຽບ: ຂ່າວໂດຍ ໜັງສືພິມລາວພັດທະນາ**

*ວັນທີ 5 ມີນາ 2018*

ໃນອາທິດຜ່ານມານີ້ ເຂື່ອນໄຟຟ້ານໍ້າງຽບ 1 ໄດ້ຈັດພິທີມອບ-ຮັບເຮືອນ ແລະໃບຢັ້ງຢືນສິດການນຳໃຊ້ໃຫ້ແກ່ປະຊາຊົນ ເມືອງຮົ່ມ ແຂວງໄຊສົມບູນ ທີ່ຍົກຍ້າຍເຂົ້າມາບ້ານຈັດສັນພູໂຮມໄຊ ເມືອງບໍລິຄັນ ແຂວງບໍລິຄຳໄຊ ເພື່ອຮອງຮັບປະຊາຊົນທີ່ຖືກຜົນກະທົບຈາກໂຄງການດັ່ງກ່າວຈຳນວນ 83 ຄອບຄົວ.

ໃນເມືອງຮົ່ມ ແມ່ນມີປະຊາຊົນທັງໝົດ 479 ຄອບຄົວທີ່ໄດ້ຜົນກະທົບຈາກໂຄງການ, ໃນນັ້ນ 51 ຄົວເຮືອນໄດ້ເລືອກຍົກຍ້າຍເຂົ້າມາອາໄສທີ່ ບ້ານພູໂຮມໄຊ, ສ່ວນຈຳນວນທີ່ເຫຼືອສະໝັກໃຈຍ້າຍໄປເຂດອື່ນ, ພາຍຫລັງທີ່ໄດ້ຮັບການຊົດເຊີຍຈາກໂຄງການ.

*ອ່ານຂ່າວທີ່ກ່ຽວຂ້ອງ: ປະຊາຊົນໂຍກຍ້າຍຈາກເຂື່ອນນໍ້າງຽບ 1*

**ຂ.ຫຼວງພຣະບາງ ເລັ່ງກໍ່ສ້າງ ບ້ານ ຈັດສັນ: ຂ່າວໂດຍ ວິທະຍຸເອເຊຍເສຣີ**

*ວັນທີ 5 ມີນາ 2018*

ທາງການເມືອງງອຍ ແຂວງຫລວງພຣະບາງ ເລັ່ງກໍ່ສ້າງບ້ານຈັດສັນ ໃຫ້ປະຊາຊົນ ທີ່ຖືກຜົລກະທົບ ຈາກເຂື່ອນນໍ້າອູ 3 ໂດຍຈະໃຫ້ ແລ້ວກ່ອນ ປີ 2020, ກ່ອນຈະຕັນນໍ້າສ້າງເຂື່ອນ ເນື່ອງຈາກວ່າ ປະຊາຊົນຈຳນວນນຶ່ງ ຈະບໍ່ມີບ່ອນຢູ່ ຫາກບ້ານຈັດສັນສ້າງບໍ່ແລ້ວ.

ບ້ານທີ່ຖືກອັນຜົນກະທົບ ມັນຈະມີບ້ານຫາດຂາມ, ບ້ານສົບຊິງ, ບ້ານຫາດສາ, ແລະບ້ານໄຊຊະນະ ມັນມີ 4 ບ້ານນຳກັນ ບ້ານນຶ່ງກໍປະມານ 60-70 ຫລັງຄາເຮືອນ ເພາະວ່ານໍ້າມັນຈະຫຼາຍ ແບບຖ້ວມບ້ານນະ ຖ້າຕັນເຂື່ອນແລ້ວ ນໍ້າມັນຈະຍິ່ງຂຶ້ນ ມັນຈະຖ້ວມບ້ານ.

ບ້ານທີ່ຖືກຜົລກະທົບຈາກເຂື່ອນນໍ້າອູ 3 ມີທັງໝົດ 20 ບ້ານ ຢູ່ໃນ 3 ເມືອງ ຄື: ເມືອງ ງອຍ ແຂວງຫຼວພຣະບາງ, ເມືອງຂວາ ແລະ ເມືອງໃໝ່ ແຂວງຜົ້ງສາລີ, ແຕ່ສະເພາະຢູ່ເມືອງງອຍ ປະຊາຊົນ 340 ຄອບຄົວ ແມ່ນໄດ້ຮັບຄ່າຊົດເຊີຍແລ້ວ ໃນເດືອນ ກຸມພາ ປີ 2017 ສ່ວນ ອີກ 6 ບ້ານ ຍັງບໍ່ໄດ້ຮັບ ຄ່າຊົດເຊີຍເທື່ອ.

**ລັດຖະຕົນຕີ ກຊສ ເນັ້ນປັບປຸງແຜນແມ່ບົດການຈັດສັນນຳໃຊ້ທີ່ດິນແຫ່ງຊາດໃຫ້ສຳເລັດໂດຍໄວ: ຂ່າວໂດຍ ເສດຖະກິດການຄ້າ**

*ວັນທີ 6 ມີນາ 2018*

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ຈັດກອງປະຊຸມເປີດກວ້າງການທາບທາມຜ່ານຮ່າງກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງຂັ້ນສູນກາງ ແລະ ນະຄອນຫຼວງວຽງຈັນຂຶ້ນໃນວັນທີ 6 ມີນາ 2018 ທີ່ ກຊສ.

ຈຸດປະສົງໃນການຈັດກອງປະຊຸມໃນຄັ້ງນີ້ແມ່ນ ເພື່ອເປັນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍມະຕິຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 026/ຄບສພ ລົງວັນທີ 3 ສິງຫາ 2017 ວ່າດ້ວຍການເພີ່ມທະວີການຄຸ້ມຄອງ ແລະ ພັດທະນາທີ່ດິນໃນໄລຍະໃໝ່ ແລະ ເປັນການປຶກສາຫາລືຄົ້ນຄວ້າ ແລະ ປະກອບຄຳຄິດເຫັນໃສ່ເນື້ອໃນຮ່າງກົດໝາຍວ່າດ້ວຍທີ່ດິນ (ສະບັບປັບປຸງ) ໃຫ້ມີເນື້ອໃນຄົບຖ້ວນ, ສົມບູນ ແລະ ເປັນເອກະພາບກັນທາງດ້ານຫຼັກການກ່ອນຈະສະເໜີໃຫ້ ກະຊວງຍຸຕິທຳກວດກາຄວາມສອດຄ່ອງທາງ

ດ້ານກົດໝາຍ ແລະ ສະເໜີຜ່ານກອງປະຊຸມລັດຖະບານປະຈຳເດືອນພຶດສະພາ 2018 ນີ້ ເພື່ອຮັບຮອງ ແລະ ນຳສະເໜີຜ່ານກອງປະຊຸມສະໄໝສາມັນ ຊຸດທີ 6 ຂອງສະພາແຫ່ງຊາດ ຄັ້ງທີ VIII ເພື່ອພິຈາລະນາຮັບຮອງເອົາ.

**ແຜນຍຸດທະສາດປ່າໄມ້ ແຕ່ນີ້ຫາ 2020 ທົ່ວປະເທດຈະຕ້ອງມີເນື້ອທີ່ປ່າປົກຫຸ້ມ 70%: ຂ່າວໂດຍ ຈຳປາໂພສ**

*ວັນທີ 7 ມີນາ 2018*

ການຈັດຕັ້ງປະຕິບັດນະໂຍບາຍ ແລະ ຍຸດທະສາດປ່າໄມ້ ໃນໄລຍະຜ່ານມາຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ເຊິ່ງໄດ້ສ້າງຜົນກະທົບຕໍ່ປ່າໄມ້ ແລະ ເຮັດໃຫ້ເນື້ອທີ່ປ່າໄມ້ຫຼຸດລົງໃນແຕ່ລະໄລຍະ; ຕາມການສຳຫຼວດຂອງກະຊວງກະສິກຳ ແລະ ປ່າໄມ້ ໄດ້ຊີ້ໃຫ້ເຫັນວ່າ: ໃນປີ 1940 ຄາດຄະເນການປົກຫຸ້ມປ່າໄມ້ໃນລາວ ມີປະມານ 70% ຂອງເນື້ອທີ່ທົ່ວປະເທດ ແລະ ໃນປີ 2015 ເຫັນວ່າເນື້ອທີ່ປ່າໄມ້ຫຼຸດລົງຮອດ 58% ເຊິ່ງສາເຫດທີ່ເຮັດໃຫ້ປ່າໄມ້ຫຼຸດລົງແມ່ນການຫັນປ່ຽນເນື້ອທີ່ປ່າໄມ້ໄປສູ່ເປົ້າໝາຍອື່ນແບບບໍ່ມີແຜນການ, ການຖາງປ່າເຮັດໄຮ່ຂອງປະຊາຊົນບັນດາເຜົ່າ ໂດຍສະເພາະໃນເຂດພູດອຍ ແລະ ການຂຸດຄົ້ນໄມ້ແບບບໍ່ຍືນຍົງ.

ສຳລັບຍຸດທະສາດປ່າໄມ້ຮອດປີ 2020 ການກຳນົດຄາດໝາຍສູ້ຊົນຄືຕ້ອງຍົກລະດັບຄວາມອຸດົມສົມບູນຂອງປ່າໄມ້ທີ່ມີໃນປັດຈະບັນໃຫ້ໄດ້ 70% ( 16.5 ລ້ານເຮັກຕາ ) ດ້ວຍການຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ທີ່ບໍ່ຖືກທຳລາຍ; ຟື້ນຟູປ່າໄມ້ທີ່ເສື່ອມໂຊມໃຫ້ໄດ້ 6 ລ້ານເຮັກຕາ; ປູກໄມ້ໃຫ້ໄດ້ 5 ແສນເຮັກຕາ.

*ອ່ານຂ່າວທີ່ກ່ຽວຂ້ອງ: ລັດກຳນົດປູກໄມ້ ແລະ ຟື້ນຟູປ່າໃຫ້ໄດ້ 70% ໃນປີ 2020*

**ອ່ານຂ່າວເດັ່ນປະຈຳອາທິດເພີ່ມເຕີມ:**

ປະທານປະເທດເນັ້ນໃຫ້ກະຊວງ ກປ ເອົາໃຈໃສ່ 4 ບັນຫາໃຫຍ່ ແລະ ກະຊວງ ກປ ເຜີຍ 4 ແຜນງານໃຫຍ່ທີ່ຈະປະຕິບັດໃນປີ 2018: ຂ່າວໂດຍ ເສດຖະກິດການຄ້າ

ທ່ານຮອງນາຍົກ ລົງຕິດຕາມໂຄງການກໍ່ສ້າງເຂື່ອນນ້ຳອູ2: ຂ່າວໂດຍ ເສດຖະກິດການຄ້າ

ໂຄງການ ພະລັງງານໄຟຟ້ານ້ຳຫີນບູນຕອນລຸ່ມ ຄືບໜ້າແລ້ວ 50%: ຂ່າວໂດຍ ຂ່າວສານປະເທດລາວ